# MEDI-CAL
# ໃບແຈ້ງການດຳເນີນການ

## ໃບແຈ້ງການລຶດຜ່ອນຜົນປະໂຫຍດ

ຖ້າຫາກທ່ານມີຄຳຖາມກ່ຽວກັບຈົດໝາຍສະບັບນີ້,
ໃຫ້ໂທຣະສັບຫາຜູ້ເຮັດວຽກກ່ຽວກັບການມີສິດຂອງທ່ານ.

ເຖິງຜູ້ຮັບຜົນປະໂຫຍດທີ່ຮັກແພງ,

ພວກເຮົາສົ່ງຈົດໝາຍສະບັບນີ້ມາຫາທ່ານເພື່ອແຈ້ງໃຫ້ທ່ານຊາບວ່າ ນັບແຕ່ວັນທີ່ທີ່ໄດ້ບອກໄວ້ຢູ່ໜ້າປົກນີ້ເປັນຕົ້ນໄປ, ເມດີແຄຣ໌ ຈະຈ່າຍຄ່າຢາປົວພະຍາດທີ່ທ່ານໝໍສັ່ງຂອງທ່ານເປັນສ່ວນຫລາຍໂດຍຜ່ານໂຄງການໃໝ່ຂອງ ເມດີແຄຣ໌ Part D ສຳຫລັບຢາປົວພະຍາດ. ສຳນວນຂອງພວກເຮົາສະແດງໃຫ້ເຫັນວ່າທ່ານມີທັງ ເມດີແຄຣ໌ ແລະ ເມດີ-ຄາລ ແລະດ້ວຍເຫດນີ້, ຜົນປະໂຫຍດສຳຫລັບຢາປົວພະຍາດທີ່ທ່ານໝໍສັ່ງຂອງ ເມດີ-ຄາລ ຂອງທ່ານຈະສິ້ນສຸດລົງ.

ພວກເຮົາຈຳເປັນຕ້ອງໄດ້ຢຸດການຈ່າຍຄ່າຢາປົວພະຍາດທີ່ໄດ້ຮັບການຄຸ້ມຄອງຈາກ ເມດີ-ຄາລ ຂອງທ່ານລົງເພື່ອປະຕິບັດຕາມກົດໝາຍເລກທີ່ 42 U.S.C. 1396u-5(d)(1) ຂອງກົດໝາຍວ່າດ້ວຍຄວາມປອດໄພທາງສັງຄົມ, ຊຶ່ງບັນຍັດໃຫ້ການຄຸ້ມຄອງຢາປົວພະຍາດຂອງ ເມດີ-ຄາລ ໃຫ້ສິ້ນສຸດລົງເວລາໃດທີ່ ເມດີແຄຣ໌ ເຣີ່ມຕົ້ນທີ່ຈະຄຸ້ມຄອງຄ່າຢາປົວພະຍາດເຫລົ່ານັ້ນແລ້ວ. ກົດໝາຍສະບັບນີ້ໃຊ້ໄດ້ແຕ່ກັບຄົນຜູ້ທີ່ມີທັງ ເມດີແຄຣ໌ ແລະ ເມດີ-ຄາລ ເທົ່ານັ້ນ. ຖ້າຫາກທ່ານຄິດວ່າທ່ານບໍ່ມີ ເມດີແຄຣ໌, ກະຣຸນາໂທຣະສັບຫາຜູ້ເຮັດວຽກກ່ຽວກັບການມີສິດຂອງທ່ານໃນທັນທີທັນໃດ.

ມີຢາບາງປະເພດທີ່ ເມດີແຄຣ໌ ຈະບໍ່ຄຸ້ມຄອງໃຫ້. ເມດີ-ຄາລ ຍັງຈະຈ່າຍຄ່າຢາທີ່ຍົກເວັ້ນເຫລົ່ານັ້ນໃຫ້. ປະເພດຂອງຢາທີ່ ເມດີ-ຄາລ ຈະຈ່າຍໃຫ້ຕໍ່ໄປກໍໄດ້ບອກຊື່ໄວ້ຂ້າງລຸ່ມນີ້:

1) ຢາ Benzodiazepines (ຢາທີ່ໃຊ້ເພື່ອລຶດຜ່ອນຄວາມກຸ້ມອົກກຸ້ມໃຈ, ປົວພະຍາດນອນບໍ່ຫລັບ (ນອນຫລັບຍາກ), ຊ່ວຍບັນເທົາກ້າມເນື້ອ, ແລະລຶດຜ່ອນການກະຕຸກຂອງກ້າມເນື້ອ.
2) ຢາທີ່ບໍ່ແມ່ນທ່ານໝໍສັ່ງ.
3) ຢາປະເພດ Barbituates (ຢາທີ່ໃຊ້ເພື່ອລຶດຜ່ອນຄວາມກຸ້ມອົກກຸ້ມໃຈ ຫລືຄວາມຕຶງຄຽດ ຫລືເພື່ອຊ່ວຍບັງຄັບອາການຊັກ).
4) ຢາທີ່ໃຊ້ເພື່ອຣະງັບອາການໄອ ແລະອາການຫວັດ.
5) ຢາໄວຕາມິນທີ່ທ່ານໝໍສັ່ງ ແລະຜະລິດພັນແຮ່ທາດ (ຢາໄວຕາມິນ/ແຮ່ທາດປະສົມກັນ ຫລືຢາເສີມອາຫານນັ້ນບໍ່ໄດ້ຮັບການຄຸ້ມຄອງ).
6) ຢາເວລາໃຊ້ເພື່ອອາການບໍ່ຢາກເຂົ້າຢາກນ້ຳ, ລຶດນ້ຳໜັກ, ຫລືນ້ຳໜັກເພີ່ມຂຶ້ນ.

ເວລາທ່ານໄປທີ່ຮ້ານຂາຍຢາ ເພື່ອຮັບເອົາຢາທີ່ທ່ານໝໍສັ່ງຂອງທ່ານ, ໃຫ້ສະແດງບັດ ເມດີ-ຄາລ ແລະບັດແຜນຢາປົວພະຍາດຂອງ ເມດີແຄຣ໌ ຂອງທ່ານໃຫ້ທ່ານໝໍຜູ້ຈ່າຍຢາເບິ່ງທັງສອງໃບ. ຖ້າຫາກທ່ານຢູ່ໃນແຜນປິ່ນປົວການບໍຣິຫານສຸຂະພາບຂອງ ເມດີ-ຄາລ ຫລືໂຄງການປິ່ນປົວທັງໝົດຣວມກັນສຳຫລັບຜູ້ເຖົ້າ, ທ່ານຄວນຈະເອົາບັດນັ້ນໃຫ້ຮ້ານຂາຍຢາເບິ່ງນຳອີກເວລາໄປຂໍເຕີມຢາທີ່ທ່ານໝໍສັ່ງ. ຖ້າຫາກທ່ານມີຄຳຖາມອື່ນໆ, ກະຣຸນາຕິດຕໍ່ກັບແຜນປິ່ນປົວການບໍຣິຫານສຸຂະພາບຂອງ ເມດີ-ຄາລ ຫລືໂຄງການປິ່ນປົວທັງໝົດຣວມກັນສຳຫລັບຜູ້ເຖົ້າຂອງທ່ານ.

**ມັນເປັນສິ່ງສຳຄັນສຳຫລັບທ່ານທີ່ຈະຮູ້ຈັກວິທີໄປເອົາຢາຂອງທ່ານໄວ້.** ເພື່ອຈະໄປເອົາຢາທີ່ທ່ານໝໍສັ່ງຊຶ່ງຈ່າຍໃຫ້ຜ່ານ ເມດີແຄຣ໌ ຂອງທ່ານນັ້ນ, ທ່ານຕ້ອງໄດ້ເຂົ້າຮ່ວມໃນແຜນຢາປົວພະຍາດຂອງ ເມດີແຄຣ໌. ຖ້າຫາກທ່ານຍັງບໍ່ທັນໄດ້ເຂົ້າຮ່ວມແຜນນັ້ນເທື່ອ, ຫລືຖ້າຫາກທ່ານຕ້ອງການຄວາມຊ່ວຍເຫລືອໃນການເລືອກແຜນທີ່ເໝາະສຳຫລັບທ່ານ, ໃຫ້ໂທຣະສັບຫາເລກ 1-800-MEDICARE (1-800-633-4227). ຜູ້ໃຊ້ TTY ຄວນຈະໂທຣະສັບຫາເລກ 1-877-486-2048. ຫລື, ທ່ານສາມາດໂທຣະສັບຫາ HICAP (Health Insurance Counseling and Advocacy Program) ໂຄງການປະກັນໄພສຸຂະພາບຂອງຣັດທ່ານທີ່ເລກ 1-800-434-0222. ຖ້າຫາກທ່ານບໍ່ເລືອກເອົາແຜນດ້ວຍຕົວທ່ານເອງ, ເມດີແຄຣ໌ ກໍຈະເອົາທ່ານເຂົ້າໃນແຜນໜຶ່ງທີ່ຢູ່ໃນເຂດຂອງທ່ານໃຫ້. ຖ້າຫາກທ່ານບໍ່ມັກແຜນນັ້ນ, ທ່ານກໍຈະສາມາດປ່ຽນໄປຫາແຜນອື່ນໃນເວລາໃດກໍໄດ້.

ທ່ານມີສິດທີ່ຈະຂໍອຸທອນໄດ້ຖ້າຫາກທ່ານຄິດວ່າພວກເຮົາມີຂໍ້ມູນທີ່ບໍ່ຖືກຕ້ອງກ່ຽວກັບຕົວທ່ານ. ຖ້າ**ພຽງແຕ່** ເຫດຜົນຂອງທ່ານໃນການອຸທອນນັ້ນແມ່ນທີ່ທ່ານຄິດວ່າກົດໝາຍນັ້ນບໍ່ຖືກຕ້ອງ ຫລືບໍ່ຍຸຕິທຳ, ຄຳອຸທອນຂອງທ່ານກໍຈະຍົກເລີກໂດຍບໍ່ມີການພິຈາຣະນາ. ຖ້າຫາກທ່ານຕ້ອງການອຸທອນການກະທຳດັ່ງກ່າວນີ້, ກະຣຸນາອ່ານດ້ານຫລັງຂອງຈົດໝາຍສະບັບນີ້. (Lao)

**ກະຣຸນາອ່ານດ້ານຫລັງຂອງໃບແຈ້ງສະບັບນີ້**